ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄະນະຊາວໜຸ່ມທະນາຄານ ທຫລ ສ້າງຂະບວນການ ເພື່ອຂໍ່ານັບຮັບຕ້ອນ ວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ



ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ (ວັນທີ 7 ຕຸລາ 1968-7 ຕຸລາ 2021) ແລະ ເພື່ອເປັນການປະກອບສ່ວນສະກັດກັ້ນການແຜ່ລະບາດຂອງພະຍາດ ໂຄວິດ-19 ປະຈຸບັນຂອງ ສປປລາວ. ສະນັ້ນ, ໃນຕອນບ່າຍ ຂອງວັນທີ 6 ຕຸລາ 2021 ຜ່ານມາ ຊາວໜຸ່ມ ທຫລ ໄດ້ນໍາເອົາອຸປະກອນທີ່ຮັບໃຊ້ໃນການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດໂຄວິດ-19 ເປັນຕົ້ນ ເຫຼົ້າ 90, ຖົງມື, ຜ້າອັດປາກ, ນໍ້າດື່ມ ແລະ ເຄື່ອງອຸປະໂພກຈໍານວນໜຶ່ງ ລວມມູນຄ່າ 6 ລ້ານກວ່າກີບ ໄປມອບໃຫ້ແກ່ກະຊວງສາທາລະນະສຸກ; ຕາງໜ້າມອບ ໂດຍທ່ານ ບຸນທະວີ ສຸກດາວົງ ກໍາມະການຄະນະບໍລິຫານງານຊາວໜຸ່ມປະຊາຊົນ ປະຕິວັດລາວ ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ, ຫົວໜ້າກົມພິມຈໍາໜ່າຍ, ທຫລ, ແລະ ຕາງໜ້າຮັບ ໂດຍ ທ່ານ ດຣ ລັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ແລະ ທ່ານ ດຣ ໄພວັນ ແກ້ວປະເສີດ ຄະນະເລຂາທິການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເລຂາຄະນະບໍລິຫານງານຊາວໜຸ່ມກະຊວງສາທາລະນະສຸກ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ການນໍາເອົາອຸປະກອນທີ່ຮັບໃຊ້ໃນການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດໂຄວິດ-19 ໄປມອບໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ 19 ເທື່ອນີ້ ກໍ່ເພື່ອເປັນການປະກອບສ່ວນອຸປະກອນທີ່ຈໍາເປັນ ທີ່ໃຊ້ເຂົ້າໃນວຽກງານດັ່ງກ່າວ ທີ່ກໍາ

ລັງເຄັ່ງຮອນ ແລະ ອີກດ້ານໜຶ່ງ ກໍ່ເພື່ອເປັນການສ້າງຂະບວນການເພື່ອຂໍ່ານັບຮັບຕ້ອນວັນສໍາຄັນຂອງ ທຫລ ກໍ່ຄືວັນສ້າງຕັ້ງ ທຫລ ຄົບຮອບ 53 ປີ (7 ຕຸລາ 1968 – 7 ຕຸລາ 2021) ໃຫ້ມີບັນຍາກາດຟົດຟື້ນ.



ຕອນທ້າຍ ທ່ານ ດຣ  ລັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ໄດ້ສະແດງຄວາມຂອບໃຈຕໍ່ອົງການຈັດຕັ້ງມະຫາຊົນຂອງ ທຫລ ທີ່ຍາມໃດກໍ່ເຫັນເຖິງຄວາມສໍາຄັນຂອງວຽກງານສາທາລະນະສຸກ  ເຊິ່ງເປັນໃຈກາງໃນການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດດັ່ງກ່າວ ໃນລະຍະທີ່ຍຸ້ງຍາກສັບສົນນີ້ ທາງຄະນະສະເພາະກິດ ຈະນໍາເອົາເຄື່ອງດັ່ງກ່າວໄປນໍາໃຊ້ເຂົ້າໃນວຽກງານໃຫ້ເກີດປະສິດທິຜົນສູງສຸດ.

# ຂ່າວ-ພາບ: ສົມອົກ ເຄນຄໍາແພງ



*ໃຊ້ເງິນກີບ ທົ່ວທັງຊາດ ສ້າງບົດບາດ ຄ່າເງິນລາວ*